ສະບັບປັບປຸງ

# 123 ອະມະຕະເພງລາວ






ຮິບໂຮມ ແລະ ຈັດພິມໂດຍ : ຈັນທອນ ທັມມະເທໂວ

ຮຽບຮຽງ ໂດຍ : ບຸນເສີນ ແສງມະນີ

ກວດແກ້ ໂດຍ : ໄຊຍະສິນ ສີໂຄດຈຸນນະມາລີ

# 123 ອະມະຕະເພງລາວ

ສະບັບປັບປຸງ






ຮິບໂຮມ ແລະ ຈັດພິມໂດຍ : ຈັນທອນ ທັມມະເທໂວ

ຮຽບຮຽງ ໂດຍ : ບຸນເສີນ ແສງມະນີ

ກວດແກ້ ໂດຍ : ໄຊຍະສິນ ສີໂຄດຈຸນນະມາລີ

ອະນຸຍາດພິມ ເລກທີ 43 / ສປກ ລົງວັນທີ 05 ເດືອນ ເມສາ ປີ 2005
ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ
ກົມ ສິລະປະກຳ

ຕາມ ລທບ 437 ພຈ 22122009
ພິມຄັ້ງທີ II ສະບັບປັບປຸງ ຈຳນວນ 3 000 ຫົວ
ຂະໜາດພິມ 21 cm x 14.5 cm
ພິມທີ່ ດາຕາເປເປີ ການພິມ

ຈັດພິມໂດຍ: ຈັນທອນ ທັມມະເທໂວ
020 5662956; 020 2888699; 021 770585
( © ສະຫງວນລິຂະສິດ )

# *ຜູ້ ຮິບໂຮມ ແລະ ຈັດພິມ*

ດ້ວຍຄວາມພາກພູມໃຈເປັນຢ່າງຍິ່ງ , ຂ້າພະເຈົ້າ ຂໍຂອບໃຈ ເປັນຢ່າງສູງນຳ ບັນດາທ່ານຜູ້ອ່ານ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ເປັນກຳລັງໃຈໃຫ້ຂ້າພະເຈົ້າ ໃນການຮິບໂຮມແລະຈັດພິມປຶ້ມລວມເພງລາວ , ຊຶ່ງນອກຈາກ ປຶ້ມລວມເພງລາວ 199 ເພງດັງ ເຫຼັ້ມ 2 ແລະປຶ້ມອະມະຕະເພງລາວ ຊຶ່ງ ປະກອບດ້ວຍ ຂອດ ໂນດ-ຊອນແຟ ແລ້ວ ດ້ວຍຄວາມ ມຸ້ງມະນະ ເພື່ອຢາກເສີມຂະຫຍາຍ ເພງລາວ ຊຶ່ງເປັນທີ່ນິຍົມຊົມຊອບ ແລະເປັນເອກະລັກ ຂອງຄົນລາວ. ໂດຍໄດ້ຮັບອະນຸຍາດ ຈາກກະຊວງຖະແຫຼງຂ່າວແລະ ວັດທະນະທຳ ຊຶ່ງຜ່ານການກວດກາ ຈາກ ກົມສິລະປະກຳ ແລະ ອະນຸຍາດພິມ ຂອງກົມພິມຈຳໜ່າຍ. ຊຶ່ງອີງ ຕາມຄວາມຮຽກຮ້ອງຕ້ອງການຂອງທ່ານຜູ້ອ່ານ ທີ່ໃຫ້ຄວາມສົນໃຈ ແລະ ເພື່ອເປັນການປັບປຸງແລະເສີມຂະຫຍາຍ ເຮັດໃຫ້ບົດເພງ ທີ່ໄດ້ຈັດພິມລົງໄປນັ້ນ ນອກຈາກ ຈະເປັນພຽງເນື້ອຮ້ອງແລ້ວ ກໍຢາກໃຫ້ນຳສະເໜີດ້ວຍການປະກອບຂອດ ກີຕ້າເຂົ້າກັບເນື້ອຮ້ອງ ຕື່ມ . ສະນັ້ນ , ເພື່ອ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງທ່ານຜູ້ອ່ານ ແລະ ບັນດາທ່ານທີ່ຕ້ອງການຫຼິ້ນກີຕ້າປະກອບກັບບົດເພງທີ່ທ່ານຕ້ອງການ. ຂ້າພະເຈົ້າ ໄດ້ຄັດເລືອກເອົາບົດເພງ ຈາກປຶ້ມລວມເພງລາວ 199 ເພງດັງ ຈຳນວນ 123 ບົດເພງ ມາຈັດພິມ ເປັນເຫຼັ້ມ ປະກອບດ້ວຍ ຂອດ ກີຕ້າ, ຊຶ່ງກໍນັບວ່າ ເປັນຜົນງານຂອງ *ທ່ານ ໄຊຍະສິນ ສີໂຄດຈຸນນະມາລີ*, ຂ້າພະເຈົ້າ ຂໍສະແດງ ຄວາມຂອບໃຈ ເປັນຢ່າງສູງ ມາຍັງທ່ານ ອີກເທື່ອນຶ່ງ ທີ່ໄດ້ເສຍສລະເວລາ ອັນມີຄຸນຄ່າ ໃນການປະກອບ ຂອດເພງ ເຂົ້າໃນປຶ້ມເຫຼັ້ມນີ້, ຊຶ່ງເຮັດໃຫ້ປຶ້ມລວມເພງລາວ ໄດ້ຮັບການເສີມຂະຫຍາຍແລະມີການປັບປຸງຂຶ້ນໄປເທື່ອລະກ້າວ.

ຂ້າພະເຈົ້າຜູ້ຮິບໂຮມ ແລະຈັດພິມ ມີຄວາມຍິນດີຮັບເອົາຄຳຕຳນິຕິຊົມ ຈາກທຸກໆທ່ານ ບໍ່ວ່າ ຈະເປັນຂໍ້ຜິດພາດຄາດເຄື່ອນ ທາງດ້ານເນື້ອໃນ ແລະ ການຕີພິມ ຂອດເພງຕ່າງໆ ເພື່ອຈະໄດ້ ນຳໄປປັບປຸງແລະແກ້ໄຂໃນໂອກາດຕໍ່ໄປ.

ຂໍຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງ

ຈັນທອນ ທັມມະເທໂວ

# ສາລະບານ


| ໜ້າ ຊື່ເພງ | ໜ້າ ຊື່ເພງ |
|---|---|
| 1. ເພງຊາດລາວ | 21. ສິ້ນແລ້ວຮັກຂ້າ |
| 2. ກຸຫຼາບປາກເຊ | 22. ສິມຣິດສິມຮັກ |
| 3. ກຸຫຼາບປາກຊັນ | 23. ສອງຝັ່ງຂອງ |
| 4. ກຸຫຼາບແທນກາຍ | 24. ສະຫຼັກຈິດ |
| 5. ກັບມາຮັກກັນໃໝ່ | 25. ສະຫວັດດີນ້ອງສາວ |
| 6. ກ້ຽວສາວແຄມງື່ມ | 26. ສະຫວັນແດນຮັກ |
| 7. ແກ້ວລືມຄອນ | 27. ສາວຖິ່ນແກ້ວ |
| 8. ຂັນໝາກມາແລ້ວ | 28. ສາວໄຕດຳຕ່ຳແຜ່ນ |
| 9. ຂອບໃຈ | 29. ສຸກສັນວັນປີໃໝ່ |
| 10. ຂາດຮັກ | 30. ສື່ຮັກຈາກສາຍຕາ |
| 11. ຄິດຮອດຄວາມຮັກ | 31. ສຽງສັ່ງຈາກຄົນຊ້ຳ |
| 12. ຄິດເຖິງ | 32. ແສງເດືອນເຕືອນໃຫ້ເສົ້າ |
| 13. ຄົນງາມໃຈແຫຼ້ | 33. ເສື້ອແດງທີ່ຮັກ |
| 14. ຄວາມຮັກຂອງນ້ອງຄືງຊື້ ດ້ວຍເງິນ | 34. ຊັງຄົນຫຼາຍໃຈ |
| 15. ຈິດໝາຍນ້ອຍ | 35. ຊ່ວຍເຖິດນາງໝໍ |
| 16. ຈອມໃຈຄົນຈີນ | 36. ຊາຍໃຈຊື່ |
| 17. ຈຳປາເມືອງລາວ | 37. ຊຽງຂວາງແດນງາມ |
| 18. ໃຈໜໍໃຈ | 38. ເຊບັ້ງຫຽງ |
| 19. ສວນມອນລຳລຶກ | 39. ເຊໂປນລຳລຶກ |
| 20. ສັ່ງຟ້າຫາຄູ່ | 40. ເຊື້ອອ້າຍດີກວ່າ |

| | |
|---|---|
| 41. ຍັງຮັກນ້ອງຢູ່ | 62. ປາກເຊແດນງາມ |
| 42. ຍາມຮັກຍາມຊັງ | 63. ປາແດກກົ້ນໄຫ |
| 43. ດົນໆຈຶ່ງເຫັນກັນ | 64. ປູ່ຈັນ |
| 44. ດອກບົວທອງ | 65. ເປັນມິດກັນດີກວ່າ |
| 45. ຕົກແຊ່ງແກ່ງລອຍ | 66. ເປັນຫັງງຈຶ່ງລືມ |
| 46. ໄຕດາລຳພັນ | 67. ໄປໃສມາ |
| 47. ຖ້າອ້າຍມີປີກ | 68. ໄປຄ້າຍມາ |
| 48. ນົກເຂົາລືມຄອນ | 69. ຜູ້ຊາຍມາຍາ |
| 49. ນວນນ້ອງວຽງສະຫວັນ | 70. ໃຜມີໃຈຮັກແທ້ |
| 50. ນ້ອງຍອມຫຼີກທາງ | 71. ພອນວັນເກີດ |
| 51. ນາງທີ່ຮັກ | 72. ເພື່ອນກິນເພື່ອນຕາຍ |
| 52. ນີ້ຫຼືຮັກຈິງ | 73. ພຽງນ້ອງຈາກ |
| 53. ນ້ຳຂອງຍາມແລງ | 74. ພຽງຜິດນັດ |
| 54. ບາງທີ | 75. ພຽງແຕ່ຄິດ |
| 55. ບ້ານນາຜາສຸກ | 76. ເພັດໃນຕົມ |
| 56. ບ້ານໂພນທີ່ຝັງໃຈ | 77. ເພາະອ້າຍລືມນ້ອງບໍ່ລົງ |
| 57. ບຸບຜາຈອມໃຈ | 78. ຟັງນະຄົນດີ |
| 58. ບໍ່ລືມວຽງຈັນ | 79. ມົນຮັກວັງວຽງ |
| 59. ບໍ່ອາດລືມນ້ອງລົງ | 80. ເມືອງຊຳລຳລຶກ |
| 60. ບໍ່ຮັກບໍ່ຈົ້ | 81. ເມືອງມໍລະດົກໂລກ |
| 61. ປາກ | 82. ຢາກພົບຄັ້ງສຸດທ້າຍ |
| 83. ຢາກໃຫ້ໂລກນີ້ມີເຮົາສອງຄົນ | 104. ອ້າຍຊິວ່າຢ່າງໃດ |
| 84. ຢ່າກຽດກັນ | 105. ອ້າຍຍັງຈະທວນມາ |

| | |
|---|---|
| 85. ຢ່າເຊື່ອຜູ້ຊາຍ | 106. ອ້າຍມາທີຫຼັງ |
| 86. ຢາກຝາກຄວາມຮັກ | 107. ອ້າຍອາດມາຊ້າ |
| 87. ຢາດນ້ຳທານຮັກ | 108. ອາໄລຮັກ |
| 88. ຢາດນ້ຳຝົນຢົດນ້ຳຕາ | 109. ໂອ ! ເມືອງຫຼວງ |
| 89. ຢ່າມາອໍ້ແອ້ | 110. ຮັກສາວລ່ອງແຈ້ງ |
| 90. ອໍ້ແອ້ເພາະຮັກ | 111. ຮັກສາວໂພນໂຮງ |
| 91. ຢ່າຫ່ວງ | 112. ຮັກສາວເຮືອນໃກ້ |
| 92. ຢ່າຫ້າມໃຈ | 113. ຮັກໜຶ່ງໃຈດຽວ |
| 93. ຣາຕຣີພາຝັນ | 114. ຮັກບໍ່ລືມ |
| 94. ລືມໄລບ້ານປ່າ | 115. ຮັກເຈົ້າສຸດຫົວໃຈ |
| 95. ລາ | 116. ຮັກເຈົ້າດອກຈຶ່ງຢອກເຈົ້າຫຼິ້ນ |
| 96. ລຳວົງພາເພີນ | 117. ເໝືອນຄົນມີກຳ |
| 97. ວິມານວຽງທອງ | 118. ໜາມຊີວິດ |
| 98. ວຽງຈັນຂວັນໃຈ | 119. ຫຼີກໄປ |
| 99. ວຽງໃນຝັນ | 120. ຫຼວງພະບາງແດນງາມ |
| 100. ຫີນເຫີບແດນງາມ | 121. ເຫຼືອພຽງຮອຍຊ້ຳ |
| 101. ຫ່າງຮັກ | 122. ເຫຼືອພຽງພາບ |
| 102. ອ້າຍຂໍເວລາສອງປີ | 123. ຫວັ່ນໃຈ |
| 103. ອ້າຍຈະຄອຍ | |

# ຊາດລາວ

*ເນື້ອຮ້ອງ : ສີຊະນະ ສີສານ*

*ທຳນອງ ໂດຍ : ດຣ.ທອງດີ ສູນທອນວິຈິດ*

- ຊາດລາວ F ຕັ້ງແຕ່ໃດມາ ລາວທຸກທົ່ວໜ້າ ເຊີດຊູສຸດໃຈ
  ຮ່ວມແຮງ ຮ່ວມຈິດຮ່ວມໃຈ ສາມັກຄີກັນ ເປັນກຳລັງດຽວ C
  ເດັດດ່ຽວ F ພ້ອມກັນກ້າວໜ້າ ບູຊາ $B^b$ ຊູກຽດຂອງລາວ Gm
  ສົ່ງເສີມ F ໃຊ້ສິດເປັນເຈົ້າ ລາວທຸກຊົນເຜົ່າ C ສະເໝີພາບກັນ F

- ບໍ່ໃຫ້ F ຝູງຈັກກະພັດ ແລະພວກຂາຍຊາດ $B^b$ ເຂົ້າມາລົບກວນ F
  ລາວທັງມວນຊູເອກະລາດ ອິດສະລະພາບຂອງຊາດລາວໄວ້
  ຕັດສິນໃຈ $B^b$ ສູ້ຊີງເອົາໄຊ F ພາຊາດກ້າວໄປ C ສູ່ຄວາມວັດທະນາ F

# ກຸຫຼາບປາກເຊ

*ເນື້ອຮ້ອງແລະ ທຳນອງໂດຍ : ບຸນທະມາລີ ບຸນຊ່ວຍ*

*ຮ້ອງໂດຍ : ບຸນທະມາລີ ບຸນຊ່ວຍ*

***Intro: F-F-Gm-C-F-F***

- ກຸຫຼາບປາກເຊ **F** ເອົາໄວ້ເອ້ງາມຕາ
  ບຸບຜາເຄີຍຖະໜອມ **Gm-C** ຫອມກິ່ນບໍ່ວາຍ **F**

I ຫອມດວງມາລາ **F** ນຶກຢາກໄດ້ບູຊາ **Dm** ໃນເມື່ອຍາມຣາຕີ **F**
ສິ່ງທີ່ພາເບີກບານ **Bb** ໃນສະຖານບ້ານເຮົາ **F**
ງາມຈິງບໍ່ເສົ້າ **F** ທຳໃຫ້ເຮົາງາມຍິ່ງ ເປັນທີ່ສິ່ງເຕືອນຕາ **Gm-C** ຫອມ
ຊື່ນວິນຍາ **F** ດວງມາລາງາມຍິ່ງ **Bb**
ອັນເປັນສິ່ງຕ້ອງຕາ **Dm** ດວງມາລາເຄີຍຊົມ (ຊ້ຳ) **F-C-F-F**
ກຸຫຼາບປາກເຊ **F** ເອົາໄວ້ເອ້ງາມຕາ
ບຸບຜາເຄີຍ ຖະໜອມ **Gm** ຫອມກິ່ນບໍ່ວາຍ **F**

II ກຸຫຼາບຂອງໃຜ **F** ນຶກຢາກໃສ່ພານທອງ **Dm** ບໍ່ໃຫ້ເສົ້າໝອງສີ **F**
ເຈົ້າມາລີແຄມເຊ **Bb** ເອົາໄວ້ເອ້ໄວ້ຊົມ **F**
ດູດອກແລະໃບ **F** ງາມຕິດໃຈທຸກສິ່ງ ຄືງບໍ່ມີວັນລືມ **Gm-C**
ບໍ່ຄວນຢູ່ປ່ຽວ **F** ຄືງຈະຫ່ຽວແຫ້ງໄປ **Bb**
ດູອັນໃດງາມຍິ່ງ **Dm** ທຸກໆສິ່ງຕ້ອງຕາ ( ຊ້ຳ ) **F-C-F-F**

III ເຮົາເຄີຍເດັດດົມ **F** ຍາມແລງເຄີຍຊົມ **Dm** ຕາມສາຍລົມແຄມເຊ **F**
ເມື່ອສາຍລົມເລ້ລວນ **Bb** ກິ່ນນັ້ນຊວນໃຈເຮົາ **F**
ຄິດເຖິງຄວາມເກົ່າ **F** ທີ່ເຮົາເຄີຍມີມາ ເຄີຍເບີກບານດອມກັນ **Gm-C**
ຍອດລົມຫາຍໃຈ **F** ຮັກບໍ່ມີວັນວາຍ **Bb**
ແສນເສຍດາຍດວງນັ້ນ **Dm** ທຸກຄືນວັນບໍ່ວາຍ ( ຊ້ຳ ) **F-C-F-F**

- ກຸຫຼາບປາກເຊ **F** ເອົາໄວ້ເອ້ງາມຕາ
  ບຸບບຜາເຄີຍຖະໜອມ **Gm-C** ຫອມກິ່ນບໍ່ວາຍ **F**

24 / VII
ຫ້າມຈຳໜ່າຍ

# ກຸຫຼາບປາກຊັນ

*ເນື້ອຮ້ອງແລະ ທຳນອງໂດຍ : ສຸຣິວັດ ຣັດຕະນະສະຫວັນ*

*ຮ້ອງໂດຍ : ຄຳເຕີມ ຊານຸບາ*

***Lamwong Intro : F- F - $A_7$ – Dm***

**I** ແດນດິນຖິ່ນໄກ ເຫຼືອຕາ *Dm*
ຢູ່ສຸດນະພາ ຍັງມີດອກຟ້າແສນງາມ *C*
ຫາກໃຜໄດ້ເຫັນຈະມົວຫຼົງ *Dm* ເຝົ້າຝັນພະວົງຫຼົງຕິດຕາມ *F*
ສາວເອີຍສາວງາມ ງາມເຫຼືອໃຈ *A*

**II** ງາມຈິງດັ່ງຄຳ ເຂົາຊົມ *Dm*
ຫາກໄດ້ສູກລົມ ຊື່ນຊົມກັບນ້ອງສົມໃຈ *C*
ອ້າຍຂໍໄຝ່ຝັນແຕ່ນາງດຽວ *Dm* ບໍ່ຂໍຂ້ອງກ່ຽວຍິງອື່ນໃດ

**R** ໂອ $B^b$ ກຸຫຼາບ ສະຫວັນ *Gm*
ແຫ່ງເມືອງປາກຊັນ *Gm* ທີ່ອ້າຍໄຝ່ຝັນ $B^b$ ໝາຍປອງ *F*
ໃຈ *Gm* ຫວັງຢູ່ຄຽງປະຄອງ *F* ກຸຫຼາບເປັນສີດັ່ງທອງ *Am*
ເມື່ອຍາມແສງສ່ອງ ຈາກດວງສຸລີ *A*

**III** ຍາມແລງຄ່ຳລົງ ນ້ຳຊັນ *Dm*
ໂອ ບໍລິຄັນ ນ້ຳຊັນໄຫຼຜ່ານໃສດີ *C*
ແລເຫັນໝູ່ສາວເຈົ້າລ່ອງລອຍ *Dm* ໝູ່ປາໃຫຍ່ນ້ອຍລອຍຫຼິ້ນຄື *F*
ສິ້ນແສງສຸລີ $A_7$ ສອດສີແສງຈັນ *Dm*

# ກຸຫຼາບແທນກາຍ

*ເນື້ອຮ້ອງ ແລະ ທຳນອງ ໂດຍ : ສໍ ແສງສີຣິວັນ*

*ຮ້ອງໂດຍ : ສົມພອງ*

***Intro : C-Am – Am-G-C***

**I** ກຸຫຼາບດອກນີ້ *Am* ຊ່າງງາມດີນ້ອງນີ້ຂໍມອບໃຫ້ *C*
ເພື່ອເປັນຂວັນໃຈ ແກ່ຍອດຊາຍທີ່ປາຖະໜາ *C*
ກຸຫຼາບກິ່ນຫອມ *C* ນ້ອງຖະໜອມຢູ່ທຸກວັນເວລາ *F*
ແຕ່ເພື່ອອ້າຍດອກໜາ *F* ນ້ອງຈຶ່ງເດັດມາມອບໃຫ້ແທນກາຍ *Dm-G*

**II** ກຸຫຼາບດອກນີ້ *Am* ປຽບຊີວີນ້ອງຖອດແຝງສະຖິດ *C*
ເມື່ອໃດໝອງຈິດ ໂປດຢ່າຄິດຢຽບຢ່ຳທຳລາຍ *C*
ຂໍຈົ່ງຮັກສາ *C* ແມ່ນບຸບຜາຈະຊ້ຳສີແຫ້ງໃບ *F*
ແຕ່ອ້າຍຢ່າປ່ຽນໃຈ *F* ຢ່າຄິດແໜງໜ່າຍຊັງເຈົ້າຂອງກຸຫຼາບ *F*

**R** ບຸບຜາປ່ຽນໄປ *Dm* ປຽບຮ່າງກາຍຂອງຄົນເຮົານີ້ *Am*
ໜຸ່ມແໜ້ນຕຶງດີ *Am* ເຖົ້າແກ່ເສຍສີປ່ຽນແປງສະພາບ *C*
ເວັ້ນແຕ່ຫົວໃຈ *C* ມິປ່ຽນໄປເໝືອນດັ່ງກຸຫຼາບ *Am*
ຍິ່ງນານຮັກຊຶມຊາບ *C* ຊວງໃນ *G* ຖ້າໃຜມີຮັກຈິງ *C*

**III** ກຸຫຼາບດອກດຽວ *Am* ປຽບຮັກດຽວນ້ອງຝາກຝັງຕໍ່ອ້າຍ *C*
ບໍ່ມີສອງໃຈ ຝາກກັນໄວ້ *Dm* ດ້ວຍກຽດຂອງຍິງ *C*
ຂໍແຕ່ຕົວອ້າຍ *C* ນັ້ນຢ່າໝາຍພຽງຫວັງຊົມແນບອີງ *F*
ຈົ່ງຮັກຈາກໃຈຈິງ *F* ແລ້ວທຸກໆສິ່ງ *G* ຈະເປັນຂອງອ້າຍເລີຍ *C*

# ກັບມາຮັກກັນໃໝ່

*ເນື້ອຮ້ອງແລະ ທຳນອງໂດຍ : ວໍຣະເດດ ດິດທະວົງ*

*ຮ້ອງໂດຍ : ວໍຣະເດດ ດິດທະວົງ*

***Slow Intro : D-Bm- $F^{\#}{}_{m}$ -Em-D-D-D***

**I** ເມື່ອວາໂຍ $F^{\#}{}_{m}$ ໂຊຍຜ່ານມາ $^{D}$
ຍິ່ງໂນ້ມໃຈ $F^{\#}{}_{m}$ ໃຫ້ຮຽກຫາ $^{D}$ ແຕ່ນ້ອງ $^{G}$
ສຸດໝາຍປອງ $^{A}$ ນ້ອງຢູ່ໃສ $^{Bm}$
ຢູ່ໃສ ... $F^{\#}{}_{m}$ ລື້ຢູ່ໃສ $^{D}$

**II** ຍິ່ງຄິດໄປ $F^{\#}{}_{m}$ ໃຈໂສກສັນ $^{D}$
ເມື່ອສຳພັນ $F^{\#}{}_{m}$ ມາຈືດຈາງ $^{D}$
ຫ່າງຫາຍ $^{G}$ ສຸດສາຍໃຈ $^{A}$
ແລ້ວເມື່ອໃດ $^{Bm}$ ເມື່ອໃດ $F^{\#}{}_{m}$ ນ້ອງຈະໃຫ້ຄວາມຫວັງ $^{D}$

***R*** $F^{\#}{}_{m}$ ກັບມາເຖີດ *ທີ່ຮັກ ...* $F^{\#}{}_{m}$ - $^{Bm}$
ຄືນຮັກ ກັນໃໝ່ $^{D}$
ເລື່ອງແລ້ວໄປ $^{G}$ ເປັນພຽງຄວາມຫຼັງ $^{D-D_7}$
ອ້າຍນີ້ຍັງ $F^{\#}{}_{m}$ ຍັງຮັກນ້ອງ $^{G}$ ຢູ່ຢ່າງເຄີຍມີ $^{D}$

**III** ຫາກເມື່ອໃດ $F^{\#}{}_{m}$ ນ້ອງກັບຫັນ $^{D}$
ຜູກສຳພັນ $F^{\#}{}_{m}$ ໝັ້ນດັ່ງເຄີຍ $^{D}$
ອ້າຍນີ້ $^{G}$ ຈະຂໍມີ $^{A}$
ມີແຕ່ຮັກ $^{Bm}$ ຖະໜອມ $F^{\#}{}_{m}$ ມິໃຫ້ເສົ້າໝອງ $^{D}$

# ກ ກ້ຽວສາວແຄມງື່ມ

*ເນື້ອຮ້ອງ ແລະ ທຳນອງ ໂດຍ : ສໍ ແສງສີຣິວັນ*

*ຮ້ອງໂດຍ : ຄຳເຕີມ ຊານຸບານ ແລະ ທານຕະວັນ ຣາຊາສັກ*

***Intro : Dm - Dm***

( ຊາຍ ) ໂອ ! *Dm* ສາວແຄມງື່ມແຫ່ງນີ້
ອ້າຍຂໍຝາກໄມຕີ ກັບນ້ອງນີ້ດ້ວຍໃຈໝາຍໝັ້ນ
ຂໍຝາກກາຍ *F* ຝາກດວງຊີວັນ
ມອບໃຫ້ແດ່ຈອມຂວັນ *$B^b$* *C* ນວນນ້ອງສາວແຄມງື່ມ *F*
ຮັກເຈົ້າແລ້ວ *Dm* ອ້າຍບໍ່ *D* ຄິດຈະລະລືມ *Gm*
ຫວັງຕາຍຮ່ວມສາວງື່ມ *Dm* ບໍ່ລືມ ບໍ່ເລືອນໜີເລີຍ *F*
▪ ( ຍິງ ) ໂອ ! *Dm* ບ່າວ ວຽງຈັນນີ້ເອີຍ
ນ້ອງເກີດມາບໍ່ເຄີຍ ຈະຮັກຊາຍຄົນໃດມາກ່ອນ
ນ້ອງເປັນສາວ *F* ສາວປ່າດົງດອນ
ໃຜບໍ່ເຄີຍມາວອນ *$B^b$* *C* ຂໍຄວາມຮັກຈາກນ້ອງ *F*
ມີແຕ່ອ້າຍ *Dm* ຄົນດຽວ *D* ທີ່ມາໝາຍປອງ *Gm*
ນ້ອງເອງບໍ່ຂັດຂ້ອງ *Dm* ຮັກນ້ອງ *C* ແລ້ວຢ່າປ່ຽນໃຈ *Dm*
▪ ( ຊາຍ ) ນ້ຳງື່ມ *F* ຮັກແຄມງື່ມນັ້ນພຽງໃດ
ກໍ່ປຽບເໝືອນຫົວໃຈ ອ້າຍຮັກນ້ອງພຽງນັ້ນ
▪ ( ຍິງ ) ນ້ຳງື່ມ ຮັກແຄມບໍ່ຍອມແປຜັນ
ຂໍດວງໃຈອ້າຍນັ້ນ ເໝືອນນ້ຳງື່ມນີ້ແລ້ວກໍພໍ *Gm*
( ຊາຍ ) ໂອ ! *Dm* ສາວແຄມງື່ມນີ້ນໍ
ອ້າຍຂໍຮັກນ້ອງໝັ້ນ ຊົ່ວຊີວັນຈະຈາກໂລກນີ້
▪ ( ຍິງ ) ນ້ອງເໝືອນກັນ *F* ຈະຊື່ສັດພັກດີ
ຮັກແຕ່ພຽງອ້າຍນີ້ *$B^b$* *C* ບໍ່ມີວັນລືມ ໄດ້ *F*
▪ ( ຊາຍ ) ບຸນອ້າຍແລ້ວ *Dm* ນ້ອງແກ້ວ *D* ເຈົ້າຍັງເຫັນໃຈ *Gm*
( ຍິ ງ) ເພາະນ້ອງກໍຮັກອ້າຍ *Dm* ຮັກອ້າຍໝາຍຝາກຊີວັນ *Dm* (ຊາຍ )
ນ້ອງເອີຍ *F* ຢ່າເລີຍລະລືມຮັກນັ້ນ
( ຍິງ ) ອ້າຍເອີຍ ນ້ອງບໍ່ລະເລີຍຮັກນັ້ນ
(ຍິງ+ຊາຍ) ເຮົາຂໍຢູ່ຮ່ວມກັນ ຮັກກັນ *C* ຊົ່ວນິລັນດອນ *Dm*

# ແກ້ວລືມຄອນ

*ເນື້ອຮ້ອງ ແລະ ທຳນອງ ໂດຍ : ສໍ ມະນີແສງ*

*ຮ້ອງໂດຍ : ສາຍພິນ ພິລົມທອນ*

***Intro : Dm – F- C-Dm-Gm- A-Dm***

| | | |
|---|---|---|
| I | ແກ້ວເອີຍ *Dm* | ເຈົ້າເປັນຫຍັງລືມຄອນ |
| | ຫຼືງລືມບ່ອນ *F* | ລືມຄອນເຄີຍຢູ່ອາໄສ |
| | ຈາກຄອນນີ້ *C* | ແລ້ວໜີໄປມີຄອນໃໝ່ *Dm* |
| | ເຈົ້າຄຽດເຈົ້າຊັງຜູ້ໃດ *Gm* | ໜີໄປຢູ່ໃສໜໍເຈົ້າ *F* |
| II | ແກ້ວເອີຍ *Dm* | ເຈົ້າເປັນຫຍັງລືມຮັງ |
| | ໄປບໍ່ສັ່ງ *F* | ລືມຮັງເມື່ອຄັ້ງກ່ອນເກົ່າ |
| | ຄຽດໃຫ້ໃຜ *C* | ໝອງໃຈອັນໃດໜໍເຈົ້າ *Dm* |
| | ຫຼືມີໃໝ່ແລ້ວລືມເຮົາ *Gm* | ນ້ອງເຈົ້າ *Am* ແມ່ສາລິກາ *Dm* |
| R | ຈາກໄປແລ້ວ *D* | ໜໍແມ່ແກ້ວລືມຄອນ *Dm* |
| | ລືມທຸກບ່ອນ | ລືມຄອນລືມຄົນລ້ຽງມາ *F* |
| | ລືມເຂົ້ານ້ຳ *C* | ກົງທອງເຄີຍຢູ່ນັ້ນໜາ *F* |
| | ໄປແລ້ວບໍ່ຫວນກັບມາ *Gm* | ແມ່ສາລິກາຫຼົງຮັງ *Dm* |
| III | ແກ້ວເອີຍ *Dm* | ຫາກສິ້ນຄົນອູ້ມຊູ |
| | ຈົ່ງຄືນສູ່ *F* | ຄອນເດີມນ້ອງຢູ່ແຕ່ຫຼັງ |
| | ຍັງຄອຍຖ້າ *C* | ແມ່ສາລິກາຫຼົງຮັງ *Dm* |
| | ສີ່ຫ້ອງຫິວໃຈອ້າຍຍັງ *Gm* | ເປັນຮັງ *C* ຕ້ອນຮັບແກ້ວເອີຍ *F* |

# ຂັນໝາກມາແລ້ວ

*ເນື້ອຮ້ອງ ແລະ ທຳນອງ ໂດຍ : ສົມລິດ ພັນທະວົງ*

*ຮ້ອງໂດຍ : ສົມລິດ ພັນທະວົງ*

***Intro Dm-Dm-G-Gm-Dm***

**I**
ແມ່ເຖົ້າເອີຍ *Dm* ລູກເຂີຍມາແລ້ວ *F*
ແມ່ເຖົ້າແກ້ວ *Gm* ຊ່ວຍເປີດປະຕູໃຫ້ແດ່ *Dm*
ມື້ສັນວັນດີ *F* ເພື່ອນຝູງແລະເຖົ້າແກ່
ພ້ອມພາກັນແຫ *Am* ລູກເຂີຍແມ່ເຖົ້າມາ *Dm*

**II**
ເຈົ້າສາວ *Dm* ຄີງຄອຍ
ຫົວໃຈເລື່ອນລອຍ ເຝົ້າຄອຍວິວາ *F*
ໂອນວນນ້ອງ *F* ເປີດປະຕູຄອຍຖ້າ ( ຊ້ຳ ) *Dm*
ຕຽມເຂົ້າວິວາ *Am* ສົມ ປາຖະໜາ ດັ່ງໃຈ *Dm*

**R**
ຄ່າດອງ *Dm* ນ້ອງແພງ
ເງິນບໍ່ພໍແຕ່ງ *F* ນ້ອງຢ່າເສຍໃຈ
ໄດ້ກັນແລ້ວ *F* ຈະຫາມາແທນໃຫ້ ( ຊ້ຳ ) *Dm*
ຫາກບໍ່ພໍເທົ່າໃດ *Am* ໃຫ້ແມ່ເຖົ້າອອກກ່ອນເດີ ! *Dm*
ຄຳເວົ້າ : " ກິນກ່ອນຜ່ອນຫຼັງ ເນາະ ອີ່ ແມ່ ເນາະ... "

**III**
ເຈົ້າບ່າວ *Dm* ແຕ່ງກາຍ
ໃສ່ຜ້າສີໄພ ນຸ່ງເສື້ອໄໝບ່ຽງແພ *F*
ເຈົ້າສາວວັນນີ້ *F* ໃສ່ຊຸດສີໃດແດ່ ( ຊ້ຳ ) *Dm*
ໂອ ມາສົມກັນແທ້ *Am* ສົມກັນແທ້ລະເດີ... *Dm*

# ຂອບໃຈ

*ເນື້ອຮ້ອງ ແລະ ທຳນອງໂດຍ : ພິມມະ ພິມມະສອນ*

*ຮ້ອງໂດຍ : ພິມມະ ພິມມະສອນ*

***Slow Intro : Em-Am-B7-Em***

| | | |
|---|---|---|
| **I** | ຂອບໃຈ *E* | ເຫຼືອເກີນທີ່ເມີນຜ່ານພົ້ນ *Em* |
| | ຂອບໃຈ *Em* | ທີ່ຄົນບໍ່ປາຖະໜາ *G* |
| | ຂອບໃຈ *G* | ທີ່ລືມກັນໄດ້ຕໍ່ໜ້າ *G* |
| | ຂອບໃຈ *D* | ແກ້ວຕາທີ່ຄິດຕັດຮອນ *B* |
| **II** | ຂອບໃຈ *E* | ນະຄົນຂ້າຂໍຂອບໃຈ *Em* |
| | ຂອບໃຈ *Em* | ຮີບໄປຢ່າກັບມາວອນ *G* |
| | ຂອບໃຈ *G* | ທີ່ຄົນລືມສັນຍາກ່ອນ *G* |
| | ຂອບໃຈ *D* | ທີ່ຖອນເອົາຮັກກັບຄືນ *Em* |
| **R** | ຂອບໃຈ *E* | ຂໍຈົ່ງໄປດີມີໄຊ |
| | ພົບຄົນຮັກໃໝ່ *G* | ລືມໃຈໃນຮັກຫວານຊື່ນ *B* |
| | ຕັດຂາດສະບັ້ນ *B* | ລືມກັນແລ້ວຜັນເປັນອື່ນ *Em* |
| | ສຸກສົມເຊີຍຊື່ນ *Em* | ສິ່ງຄືນຮັກເດີມເສຍທີ *B* |
| **III** | ຂອບໃຈ *E* | ຮີບໄປຢ່າຫວນກັບມາ *Em* |
| | ຂອບໃຈ *Em* | ເທວາຊ່ວຍພາເຂົາໜີ *G* |
| | ຂອບໃຈ *G* | ທີ່ໄດ້ຜິດຫວັງຊາດນີ້ *G* |
| | ຂອບໃຈ *D* | ຄົນດີຂ້າຂໍຂອບໃຈ *Em* |

# ຂາດຮັກ

*ເນື້ອຮ້ອງ ແລະ ທຳນອງໂດຍ : ວໍຣະເດດ ດິດທະວົງ*

*ຮ້ອງໂດຍ : ວໍຣະເດດ ດິດທະວົງ*

***Slow Intro : Dm-Dm***

| | | |
|---|---|---|
| **I** | ໂອນົກ ***Dm*** | ໂບກບິນ ***F*** |
| | ເຈົ້າບິນຂຶ້ນລົງ ***$B^b$*** | ເລາະຫຼິ້ນກັບລົມ ***F*** |
| | ສົ່ງສຽງ ***Gm*** | ກ້ອງດັງລະງົມ |
| | ດ້ວຍຄວາມ | ສຸກສັນ ***C*** |
| **II** | ຂ້ານີ້ ***Dm*** | ສຸດເຫງົາ ***F*** |
| | ຫາຄົນຮັກມາ ***$B^b$*** | ເວົ້າຈາຕໍ່ກັນ ***F*** |
| | ກໍໄຮ້ ***Gm*** | ເໝືອນຄົນພິການ ***C*** |
| | ຮັກມາ | ແຕ່ເຍົາ ***F*** |
| **R** | ຍິງໃດໜໍ ***Dm*** | ຈະເຫັນໃຈ |
| | ນຳຄວາມຮັກ ***Am*** | ມາໃຫ້ເຮົາ |
| | ເໝືອນຄູ່ ***$B^b$*** | ນົກເຂົາ ***Dm*** |
| | ທີ່ລອຍກາງຫາວ ***$B^b$*** | ຮັກກັນສະເໝີໄປ ***C*** |
| **III** | ໂອນົກ ***Dm*** | ເຈົ້າເອີຍ ***F*** |
| | ຊ່ວຍມອງຫາຄົນ ***$B^b$*** | ຮັກຂ້າຢູ່ໃສ ***F*** |
| | ບອກເຂົາ ***Gm*** | ເຈົ້າຍັງເຫັນຊາຍ ***C*** ທີ່ຍັງຂາດຮັກ ***F*** |
| | ບອກເຂົາ ***Gm*** | ເຈົ້າຍັງເຫັນຊາຍ ***C*** ທີ່ຍັງຂາດຮັກ ***F*** |

# ຄິດຮອດຄວາມຮັກ

*ເນື້ອຮ້ອງ ແລະ ທຳນອງ ໂດຍ: ຄຳຫຼ້າ ໜໍ່ແກ້ວ*

*ຮ້ອງໂດຍ : ຈັນທະລາ ອຸເທນສັກດາ*

***Intro Em-Em-D-G***

| | | |
|---|---|---|
| I | ຄິດຮອດຄວາມຮັກ | ແລ້ວນອນບໍ່ຫຼັບ Em |
| | ໄດ້ແຕ່ນອນນັບ | ເວລານາທີ G |
| | ຍັງອີກຈັກເດືອນ | ຍັງອີກຈັກປີ Am |
| | ຈະຮອດເລີກດີ Em | ພິທີວິວາມົງຄຸນ D |
| II | ຄິດຮອດຄວາມຮັກ | ແລ້ວນນອນບໍ່ໄດ້ Em |
| | ຮູ້ສຶກຄັນຄາຍ | ກາຍໃຈເຫຼືອທົນ G |
| | ຍັງອີກຈັກແລ້ງ | ຍັງອີກຈັກຝົນ Am |
| | ໜາວນີ້ຄືງທົນ C | ຕໍ່ໄປ D ບໍ່ໄຫວຕາຍແນ່ G |
| III | ລືມແລ້ງລືມຝົນ | ລືມໜາວລືມຮ້ອນ G |
| | ພັດວີ່ພັດວອນ | ພັດຈອນລັບແລ G |
| | ລືມປາກລືມໃຈ Bm | ໃຜຈິງຈັງແດ່ Em |
| | ຂໍທານຂໍແຜ່ | ຈາກຄົນແດ່ເດ D |
| III | ຄິດຮອດຄວາມຮັກ | ຫົວໃຈຕຶກຕັກ Em |
| | ໃຈເຕັ້ນຄຶກຄັກ | ເໝືອນຈັກລົດເພ G |
| | ຢ້ານແຕ່ຄວາມຮັກ | ພັດຕົກທະເລ Am |
| | ຢ້ານຫົວໃຈເພ C | ຢ້ານເຊ D ລົງເຫວເຖິງຕາຍ G |

# ຄິດເຖິງ

*ເນື້ອຮ້ອງ ແລະ ທຳນອງ ໂດຍ : ຄຳຫຼ້າ ໜໍ່ແກ້ວ*

*ຮ້ອງໂດຍ : ບຸນທ່ຽງ ມະນີວົງ*

***Intro: F- $B^b$ –F7- $B^b$ – $E^b$ – $B^b$***

**I**
ອ້າຍຄຶງຈະຕາຍ — ຍ້ອນຄວາມຄິດເຖິງນ້ອງ $B^b$
ຄິດຫາແຕ່ນ້ອງ Cm — ຄິດຮອດແຕ່ນ້ອງ Gm ຜູ້ດຽວ $B^b$
ຄວາມຮັກຝັງປັກຊວງເລິກ — ຫົວຄ່ຳຍາມເດິກສຸດແລຫຼຽວ $E^b$
ເພາະນ້ອງຄົນດຽວ Cm — ຄົນດຽວສະເໝີມາ F

**II**
ເຖິງຕົວຢູ່ໄກ — ຫົວໃຈຍັງໂຫຍຫວນ $B^b$
ເຊົ້າຄ່ຳບ່າຍຄວນ Cm — ຫານວນຢູ່ທຸກ Gm ເວລາ $B^b$
ຢ້ານຮັກຈະໜ່າຍ ໆແໜງ — ລະແວງໃຈຢູ່ຢາກຄວາຫາ $E^b$
ຄິດແລ້ວນ້ຳຕາ F — ອ້າຍຫຼັ່ງລິງໃຈ $B^b$

**R**
ເວລານາທີ F — ທີ່ອ້າຍຫ່າງນ້ອງ Gm ຮື …ໆ
ອ້າຍທຸກໝົ່ນໝອງ $B^b$ — ຢ້ານນ້ອງປ່ຽນໃຈ Cm
ຫາກສຸດທີ່ຮັກ $B^b$ — ຮັກຈິງຈາກໃຈ F ຮື …ໆ $B^b$
ອ້າຍຂໍມາຕາຍ Cm — ຕໍ່ໜ້າຕັກນາງ Gm

**III**
ຮັກນາງບໍ່ລືມ — ຮັກດຽວບໍ່ລືມຫຼີງ $B^b$
ຫົວໃຈໝັ້ນຄົງ Cm — ຊື່ຕົງຕໍ່ນ້ອງ Gm ບໍ່ຈາງ $B^b$
ອ້າຍຮັກອ້າຍຫ່ວງ ໆຫຼາຍ — ແທບທົນບໍ່ໄດ້ເກືອບໃຈພັງ $E^b$
ຫຼີງເພີ້ພະວັງ F — ຮັກນາງຜູ້ດຽວ $B^b$

# ຄົນງາມໃຈແຫຼ້

*ເນື້ອຮ້ອງ ແລະທຳນອງໂດຍ : ຄຳຄົມ ເມືອງນະຄອນ + ສໍ ບົວລະພັນ*

*ຮ້ອງໂດຍ : ກໍ ແກ້ວກຳພ້າ*

***Intro: C-F-G-C***

**I** ຄົນງາມ ໆ *Am* ເປັນຫຍັງໃຈດຳ ໃຈແຫຼ້ *C*
ງາມຄັກງາມແທ້ ໃຈເຈົ້າແຫຼ້ ປານກາ *Am*
ສຽງປາກກໍຫວານ *C* ປານນ້ຳເຜິ້ງເມື່ອຍາມເດືອນຫ້າ *C*
ບໍ່ໜ້າ ບໍ່ໜ້າ ບໍ່ໜ້າ ເປັນຄົນໃຈດຳ *G*

**II** ຄົນຈົບດີ *Am* ເປັນຫຍັງມາມີຫຼາຍໃຈ *C*
ຫຼອກໃຫ້ຜູ້ຊາຍ ໃຫ້ຫິວອີກລະກຳ *Am*
ຫ່ຽວເອົາຄວາມງາມ *C* ຫຼອກຜູ້ຊາຍໃຫ້ເຈັບໃຫ້ຊ້ຳ *C*
ຈະຈົ້ ຈະຈຳ *F* ຄົນງາມ *G* ເຊື່ອໃຈບໍ່ໄດ້ *C*

**R** ໄປນຳຄົນອື່ນ *F* ອ້າຍແສນຫິວໃຈຊິຕາຍ *C*
ຕຳ ຕາ ຕຳໃຈ ເຫັນອ້າຍເປັນຄົນຈັ່ງໃດ *Am*
ເມື່ອຍາມຮັກກັນ *C* ບອກວ່າອ້າຍນັ້ນດີກວ່າໃຜ *C*
ໄດ້ພົບຄົນໃໝ່ ຮັ່ງມີກໍລືມອ້າຍລົງ *Am*

**III** ຄົນງາມ ໆ *Am* ເປັນຫຍັງໃຈດຳ ໃຈແຫຼ້ *C*
ໃຈອ້າຍເປັນແຜ ຍ້ອນຫິວອີກລຸ້ມຫຼົງ *Am*
ເຊື່ອໃຈຄົນງາມ *C* ຈຶ່ງຕ້ອງຊ້ຳເພາະນວນອານົງ *C*
ຕ້ອງລືມເຈົ້າລົງ *F* ລາແລ້ວ *G* ຄົນງາມໃຈແຫຼ້ *C*

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ